ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ.....01......./ນຍ

ນະຄອນຫລວງວຽງຈັນ, ວັນທີ..14.-1.-2015

# ຄໍາສັ່ງ

## ຂອງນາຍົກລັດຖະມົນຕີ

## ວ່າດ້ວຍການກວດກາປະເມີນຄວາມທຸກຍາກ ແລະ ການພັດທະນາ 5 ປີ

## (2011-2015)

**ເຖິງ:** ບັນດາທ່ານລັດຖະມົນຕີ ແລະ ຫົວໜ້າອົງການທຽບເທົ່າຂັ້ນສູນກາງ,

ບັນດາທ່ານ ເຈົ້າແຂວງ ແລະ ເຈົ້າຄອງນະຄອນຫຼວງວຽງຈັນ.

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003.

ໂດຍປະຕິບັດຕາມດໍາລັດເລກທີ 309/ນຍ, ລົງວັນທີ14/11/2013 ວ່າດ້ວຍມາດຕະຖານຄວາມທຸກຍາກ ແລະມາດຕະຖານການພັດທະນາ (2013-2015), ມາດຕາ ທີ 12 ທີ່ລະບຸໄວ້ວ່າ "“ທຸກໆ 5 ປີ ໃນຕອນທ້າຍຂອງການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງລັດ ຕ້ອງມີການທົບທວນ, ກວດກາ ແລະ ປະເມີນຜົນລະດັບຊາດ”, ເພື່ອເຮັດໃຫ້ການກວດກາປະເມີນຄວາມທຸກຍາກ ແລະ ການພັດທະນາ 5 ປີ ໄດ້ຮັບການ ຈັດຕັ້ງປະຕິບັດ ແລະ ດໍາເນີນໄປເປັນເອກະພາບກັນໃນທົ່ວປະເທດ, ບັນລຸຜົນສໍາເລັດຕາມຈຸດປະສົງຄາດໝາຍ ທີ່ວາງໄວ້,

## ນາຍົກລັດຖະມົນຕີ ອອກຄໍາສັ່ງ ດັ່ງນີ້:

**1. ຄວາມໝາຍ ຄວາມສໍາຄັນຂອງການກວດກາປະເມີນຄວາມທຸກຍາກ ແລະ ການພັດທະນາ 5 ປີ.**

ການກວດກາປະເມີນຄວາມທຸກຍາກ ແລະ ການພັດທະນາ 5 ປີ ແມ່ນການຕີລາຄາການນໍາພາ-ຊີ້ນໍາ ຂອງຄະນະພັກ, ການຄຸ້ມຄອງ ຂອງຂະແໜງການ ກໍ່ຄືອົງການປົກຄອງທ້ອງຖິ່ນ ແລະ ຄວາມເປັນເຈົ້າການຂອງອົງການຈັດຕັ້ງມະຫາຊົນທຸກຂັ້ນ ໃນການຈັດຕັ້ງປະຕິບັດ 4 ບາດກ້າວບຸກທະລຸ, ໂດຍສະເພາະແມ່ນບາດກ້າວບຸກທະລຸດ້ານການແກ້ໄຂຄວາມທຸກຍາກ, ການສ້າງບ້ານພັດທະນາ, ການສ້າງບ້ານໃຫຍ່ໃຫ້ກາຍເປັນຕົວເມືອງນ້ອຍໃນຊົນນະບົດ ຕາມ 4 ເນື້ອໃນ 4 ຄາດໝາຍ ຕິດພັນກັບການຊຸກຍູ້ ແລະ ຈັດຕັ້ງປະຕິບັດຂະບວນການແຂ່ງຂັນຮັກຊາດ ແລະ ສ້າງບ້ານພັດທະນາ, ຊຸກຍູ້ວຽກງານສາມສ້າງ ໃນໄລຍະ 5 ປີ (2011-2015) ຜ່ານມາ.

ການກວດກາປະເມີນຄັ້ງນີ້ ຍັງເປັນການປະກອບສ່ວນໃນການສະໜອງຂໍ້ມູນ ໃສ່ເນື້ອໃນກອງປະຊຸມໃຫຍ່ອົງຄະນະພັກແຂວງ ແລະ ນະຄອນຫຼວງວຽງຈັນ ກໍ່ຄື ກອງປະຊຸມໃຫຍ່ຄັ້ງທີ X ຂອງພັກ, ຮ່າງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຂອງຂະແໜງການ ແລະ ທ້ອງຖິ່ນ, ວິໄສທັດ-ຍຸດທະສາດ-ແຜນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກໃນຕໍ່ໜ້າ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII; ນອກ

ຈາກນັ້ນ ກໍ່ຍັງເປັນການເພີ່ມເຕີມໃຫ້ຜົນການສຳຫຼວດການໃຊ້ຈ່າຍ ແລະ ການຊົມໃຊ້ຂອງຄົວເຮືອນ (LECS) ເພື່ອ ຮ່າງບົດລາຍງານ ສົ່ງບັນດາອົງການຈັດຕັ້ງ ແລະ ສະຖາບັນການເງິນສາກົນຕ່າງໆ.

ການກວດກາປະເມີນ 5 ປີເທື່ອນີ້ ຍັງເປັນການປະກອບສ່ວນສ້າງຄວາມເຂັ້ມແຂງ ໃຫ້ລະບົບການເມືອງ ຂອງ ທ້ອງຖິ່ນຮາກຖານ ໃນການກຳສະພາບຮອບດ້ານ ແລະ ສ້າງແຜນການພັດທະນາຄອບຄົວ ແລະ ບ້ານຂອງຕົນຕາມ 4 ເນື້ອໃນ 4 ຄາດໝາຍ, ເປັນການສຶກສາອົບຮົມປະຊາຊົນບັນດາເຜົ່າ ໃຫ້ມີຄວາມຕື່ນຕົວ ເປັນເຈົ້າການພັດທະນາ ຕົນເອງໃຫ້ຫຼຸດພົ້ນອອກຈາກຄວາມທຸກຍາກ ແລະໃຫ້ຮັ່ງມີຂຶ້ນເທື່ອລະກ້າວ.

**2. ຈຸດປະສົງ ແລະ ຄາດໝາຍຂອງການກວດກາປະເມີນ.**

ການກວດກາປະເມີນຄວາມທຸກຍາກ ແລະ ການພັດທະນາ 5 ປີ (2011-2015) ຕ້ອງສ່ອງແສງໃຫ້ເຫັນ ຢ່າງ ພາວະວິໄສ, ຖືກຕ້ອງກັບສະພາບຄວາມເປັນຈິງ ຂອງຜົນສຳເລັດ ແລະ ຄວາມຄືບໜ້າ ໃນການແກ້ໄຂຄວາມ ທຸກ ຍາກ, ການສ້າງບ້ານໃຫ້ເປັນຫົວໜ່ວຍພັດທະນາ, ການສ້າງບ້ານໃຫຍ່ໃຫ້ກາຍເປັນຕົວເມືອງນ້ອຍໃນຊົນນະບົດ ໃນ ໄລຍະ 5 ປີ ຜ່ານມາ, ໂດຍອີງຕາມຄາດໝາຍສູ້ຊົນ ທີ່ໄດ້ລະບຸໄວ້ໃນມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ, ມະຕິ ເລກທີ 03/ກມສພ, ຄຳສັ່ງ 03/ກມສພ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ VII ກໍ່ຄື ແຜນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ 5 ປີ (2011-2015).

ການກວດກາປະເມີນ 5 ປີນີ້ ຕ້ອງຮັບປະກັນຄຸນນະພາບເປັນຕົ້ນຕໍ, ຫຼີກເວັ້ນ ການແລ່ນນຳປະລິມານ; ຕ້ອງ ກວດກາປະເມີນທຸກໆຄອບຄົວ, ທຸກໆບ້ານ, ທຸກໆເມືອງ ລວມທັງບ່ອນທີ່ໄດ້ຮັບການຢັ້ງຢືນຮອງຮັບວ່າ "ພົ້ນທຸກ" ແລະ "ພັດທະນາ" ແລ້ວ ໃນໄລຍະຜ່ານມາ; ພ້ອມດຽວກັນນັ້ນ ກໍ່ຕີລາຄາໃຫ້ເຫັນສາເຫດທີ່ພາໃຫ້ດີ ແລະ ພາໃຫ້ ອ່ອນ ເພື່ອເສີມຂະຫຍາຍຈຸດດີ ແລະ ແກ້ໄຂຈຸດອ່ອນ ໃຫ້ມີປະສິດທິຜົນ.

ຜ່ານການກວດກາປະເມີນໃນຄັ້ງນີ້ ຕ້ອງສ່ອງແສງໃຫ້ເຫັນ ເຖິງຄວາມຮັບຜິດຊອບການເມືອງ ຂອງຄະນະພັກ, ຂະແໜງການ, ອົງການປົກຄອງ ແລະ ອົງການຈັດຕັ້ງມະຫາຊົນ ຂັ້ນຕ່າງໆ ຕໍ່ວຽກງານກໍ່ສ້າງຮາກຖານການເມືອງ, ພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ, ຊຶ່ງແມ່ນພາລະກຳປະຫວັດສາດຂອງພັກເຮົາ.

ການດຳເນີນ ແລະ ການຢັ້ງຢືນ-ຮອງຮັບເອົາຜົນ ການກວດກາປະເມີນ 5 ປີ ຕ້ອງຮັບປະກັນຄວາມເປັນເອກະ ພາບ, ມີປະຊາທິປະໄຕ ແລະ ການປະກອບສ່ວນ ຂອງມະຫາຊົນ ຕິດພັນກັບການສ້າງພະນັກງານ ກໍ່ຄືນັກພັດທະ ນາກອນກັບທີ່ ໂດຍສະເພາະແມ່ນ ຢູ່ຂັ້ນເມືອງ-ຂັ້ນບ້ານ ແລະ ຊອກໃຫ້ເຫັນຕົວແບບຂອງການແກ້ໄຂຄວາມທຸກ ຍາກ ແລະ ການພັດທະນາ.

ຄາດໝາຍທາງດ້ານກຳນົດເວລາ ແມ່ນໃຫ້ເລີ້ມການກວດກາປະເມີນ 5 ປີ ແຕ່ເດືອນມັງກອນ ແລະ ໃຫ້ສຳເລັດ ໃນເດືອນມີນາ ປີ 2015; ຫຼັງຈາກນັ້ນ ໃຫ້ສັງລວມລາຍງານລັດຖະບານຮັບຮອງເອົາ ໃນເດືອນເມສາ ປີ 2015 ເປັນ ຢ່າງຊ້າ.

**3. ເນື້ອໃນຂອງການກວດກາປະເມີນ.**

ເນື້ອໃນ ຂອງການກວດກາປະເມີນ 5 ປີ ບໍ່ພຽງແຕ່ສະແດງໃຫ້ເຫັນເຖິງຜົນສຳເລັດ ຂອງການແກ້ໄຂຄວາມທຸກ ຍາກເທົ່ານັ້ນ ຍັງສ່ອງແສງໃຫ້ເຫັນ ລະດັບຂອງການພັດທະນາ ທີ່ຮອບດ້ານ ຕາມ 4 ເນື້ອໃນ 4 ຄາດໝາຍນຳອີກ.

ດັ່ງນັ້ນ, ການກວດກາປະເມີນຕ້ອງໃຫ້ຮັບປະກັນເນື້ອໃນຄວາມທຸກຍາກ ແລະ ການພັດທະນາທີ່ໄດ້ກຳນົດໄວ້ ໃນ ບັນດາ ມາດຕາ 4-5-6-7-8-9-10 ຂອງດຳລັດ 309/ນຍ ຢ່າງຄົບຖ້ວນ ຄື: ມາດຕະຖານຄອບຄົວທຸກຍາກ, ມາດຕະຖານບ້ານທຸກຍາກ, ມາດຕະຖານເມືອງທຸກຍາກ, ມາດຕະຖານຄອບຄົວພັດທະນາ, ມາດຕະຖານບ້ານ ພັດທະນາ, ມາດຕະຖານບ້ານໃຫຍ່ກາຍເປັນຕົວເມືອງນ້ອຍໃນຊົນນະບົດ, ແລະ ມາດຕະຖານເມືອງພັດທະນາ. ພ້ອມກັນນັ້ນ ໃຫ້ມີການສົມທຽບ ໃສ່ກັບຂໍ້ມູນຕົວຕັ້ງ ທີ່ໄດ້ກວດກາປະເມີນໃນປີ 2011 ເພື່ອສະແດງໃຫ້ເຫັນຄວາມ ຄືບໜ້າຂອງການຈັດຕັ້ງປະຕິບັດໃນ 5 ປີ ຜ່ານມາ.

ນອກຈາກນັ້ນ ການກວດກາປະເມີນຄັ້ງນີ້ ກໍ່ຍັງຈະໄດ້ຄັດເລືອກ ຄອບຄົວ, ກຸ່ມຄອບຄົວ ແລະ ບ້ານຕົວແບບ ໃນການແກ້ໄຂຄວາມທຸກຍາກ ເປັນຕົ້ນແມ່ນ ຕົວແບບໃນການຜະລິດເປັນສິນຄ້າ, ຕົວແບບໃນການເຮັດການບໍລິການ ແລະ ຕົວແບບດ້ານອື່ນໆ.

**4. ວິທີການໃນການກວດກາປະເມີນ.**

ການກວດກາປະເມີນນີ້ ແມ່ນການເກັບກຳຂໍ້ມູນແບບບໍລິຫານ, ກວມເອົາໝົດທຸກຄອບຄົວ, ໝົດທຸກບ້ານໃນທົ່ວປະເທດ ໂດຍແມ່ນຄະນະພັກ, ອົງການປົກຄອງທ້ອງຖິ່ນເປັນຜູ້ເຮັດ ແລະ ຢັ້ງຢືນ- ຮັບຮອງເອົາ ຢ່າງເປັນເອກະພາບກັນ ແລ້ວສັງລວມ ລາຍງານຂັ້ນເທິງ.

ວິທີການແມ່ນປະຕິບັດດັ່ງນີ້:

- ໃຫ້ ບັນດາແຂວງ ແລະ ນະຄອນຫຼວງວຽງຈັນ ຄົ້ນຄວ້າຄຳສັ່ງ, ຄຳແນະນຳກ່ຽວກັບດຳລັດເລກທີ 309/ນຍ ແລະ ເອກະສານແຈ້ງການແນະນຳ ນັບທັງແບບສອບຖາມຕ່າງໆ ໃຫ້ລະອຽດ; ທົບທວນ ຜົນຂອງການກວດກາປະເມີນ ໃນໄລຍະຜ່ານມາ ແລ້ວສ້າງເປັນແຜນການດຳເນີນ ການກວດກາປະເມີນຂອງແຂວງ / ນະຄອນຫຼວງ ແລະ ຂອງເມືອງ.

- ໃຫ້ ບັນດາແຂວງ, ນະຄອນຫຼວງວຽງຈັນ ແລະ ບັນດາເມືອງ ຈັດຕັ້ງຄະນະຮັບຜິດຊອບກວດກາປະເມີນຄວາມທຸກຍາກ ແລະ ການພັດທະນາ ໃນຂັ້ນຂອງຕົນ ທີ່ປະກອບດ້ວຍບັນດາຂະແໜງການກ່ຽວຂ້ອງຂອງທ້ອງຖິ່ນ, ໂດຍມອບໃຫ້ ຫ້ອງການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ແລະຂະແໜງສະຖິຕິ ເປັນໃຈກາງ.

- ໃຫ້ ບັນດາແຂວງ ແລະ ນະຄອນຫຼວງວຽງຈັນເປີດກອງປະຊຸມເຜີຍແຜ່ແຜນການດຳເນີນ ແລະຈັດການຝຶກອົບຮົມຂັ້ນແຂວງ-ຂັ້ນເມືອງ, ແລ້ວຈັດຕັ້ງກັນລົງຊຸກຍູ້ ຊີ້ນຳ-ນຳພາບ້ານ ດຳເນີນການກວດກາປະເມີນຕົວຈິງ ໂດຍໃຫ້ເຜີຍແຜ່ແນະນຳ ໃຫ້ປະຊາຊົນພາຍໃນບ້ານຮັບຮູ້ເຊື່ອມຊຶມກ່ອນ ເພື່ອໃຫ້ທຸກຄົນເປັນເຈົ້າການຕື່ນຕົວປະກອບສ່ວນ ແລະ ໃຫ້ຄວາມຮ່ວມມື.

-ໃຫ້ ບັນດາກະຊວງແລະອົງການທຽບເທົ່າ ຂັ້ນສູນກາງ ຊີ້ນຳຂະແໜງການສາຍຕັ້ງຂອງຕົນ ທີ່ປະຈຳຢູ່ທ້ອງຖິ່ນ ໃຫ້ຕັ້ງໜ້າເຂົ້າຮ່ວມລົງຕິດຕາມຊຸກຍູ້ການກວດກາປະເມີນໃນຄັ້ງນີ້ ໂດຍສະເພາະ ເອົາໃຈໃສ່ ເງື່ອນໄຂ ແລະ ມາດຕະຖານຄວາມທຸກຍາກ ແລະ ການພັດທະນາ ທີ່ກ່ຽວຂ້ອງຂອງຂະແໜງການຂອງຕົນ.

- ວິທີການເກັບກຳຂໍ້ມູນ ແມ່ນໃຫ້ສັງເກດ, ສອບຖາມແຕ່ລະຄອບຄົວ, ແຕ່ລະບ້ານ. ພາຍຫຼັງທີ່ສັງລວມຂໍ້ມູນແລ້ວ, ໃຫ້ເປີດກອງປະຊຸມຄະນະກວດກາປະເມີນກັບເຖົ້າແກ່ແນວໂຮມ ແລະ ອົງການຈັດຕັ້ງມະຫາຊົນຂອງບ້ານ ເພື່ອຕີລາຄາຜົນໄດ້ຮັບແລະວາງທິດທາງມາດຕະການປັບປຸງແກ້ໄຂໃນຕໍ່ໜ້າ, ແລ້ວ ເຜີຍແຜ່ໃຫ້ປະຊາຊົນພາຍໃນບ້ານຊາບຢ່າງທົ່ວເຖິງກັນ.

- ການສະເໜີຢັ້ງຢືນ ແລະ ຮັບຮອງນາມມະຍົດຂັ້ນຄອບຄົວ (ພົ້ນທຸກ ແລະ ພັດທະນາ) ແມ່ນນາຍບ້ານເປັນຜູ້ສະເໜີຕໍ່ເຈົ້າເມືອງ ແລະ ເຈົ້າເມືອງເປັນຜູ້ຕົກລົງຮັບຮອງ; ນາມມະຍົດຂັ້ນບ້ານ ແມ່ນເຈົ້າເມືອງເປັນຜູ້ສະເໜີ ແລະ ເຈົ້າແຂວງເປັນຕົກລົງຮັບຮອງ; ນາມມະຍົດຂັ້ນເມືອງ ແມ່ນເຈົ້າແຂວງເປັນຜູ້ສະເໜີ ແລະ ນາຍົກລັດຖະມົນຕີເປັນຜູ້ຕົກລົງຮັບຮອງ. ການປົດນາມມະຍົດຂອງເປົ້າໝາຍທີ່ບໍ່ສາມາດຮັກສາລະດັບການພັດທະນາໄວ້ໄດ້ ກໍ່ແມ່ນ ໃຫ້ເຮັດຕາມຂັ້ນຕອນດັ່ງກ່າວມານີ້.

- ຜົນຂອງການຄັດເລືອກ ຄອບຄົວ, ກຸ່ມ ແລະ ບ້ານຕົວແບບ ໃນການແກ້ໄຂຄວາມທຸກຍາກນັ້ນ ໃຫ້ບ້ານ, ເມືອງ ແລະ ແຂວງ ຄົ້ນຄວ້າ ພິຈາລະນາ ຂຶ້ນມາຕາມລຳດັບ ເພື່ອເປັນບ່ອນອີງໃຫ້ ບັ້ນສະຫຼຸບ ຂະບວນການແຂ່ງຂັນຮັກຊາດ ແລະ ສ້າງບ້ານພັດທະນາ, ຊຸກຍູ້ວຽກງານສາມສ້າງ ໃນທ້າຍ ປີ 2015.

- ພາຍຫຼັງສຳເລັດ ການກວດກາປະເມີນໃນແຕ່ຂັ້ນແລ້ວ, ໃຫ້ເປີດກອງປະຊຸມ ສະຫຼຸບ ຖອດຖອນ ແລະ ລາຍງານຂັ້ນເທິງ; ພ້ອມກັນນັ້ນ, ກໍ່ໃຫ້ຈັດຕັ້ງການເຜີຍແຜ່ຜົນຂອງການກວດກາປະເມີນໃຫ້ບັນດາຂະແໜງການຂອງລັດ, ພາກເອກະຊົນ ແລະ ອົງການຈັດຕັ້ງສັງຄົມທັງພາຍໃນ ແລະ ຕ່າງປະເທດ ໃຫ້ຮັບຮູ້ເຂົ້າໃຈ ແລະ ປະກອບ

ສ່ວນເຂົ້າໃນວຽກງານກໍ່ສ້າງຮາກຖານການເມືອງ ພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ, ເຮັດໃຫ້ວຽກງານດັ່ງກ່າວ ກາຍເປັນໜ້າທີ່ຂອງທົ່ວພັກ-ທົ່ວລັດ ແລະ ທົ່ວປວງຊົນ ຢ່າງແທ້ຈິງ.

- ສໍາລັບພິທີມອບ-ຮັບໃບຢັ້ງຢືນມາດຕະຖານຕ່າງໆ ໃຫ້ ຄອບຄົວ ແລະ ບ້ານ ທີ່ມີຜົນສໍາເລັດນັ້ນ ໃຫ້ຈັດຕັ້ງປະຕິບັດຕາມເງື່ອນໄຂ ຂອງແຕ່ລະທ້ອງຖິ່ນ ບົນພື້ນຖານຈິດໃຈປະຢັດມັດທະຍັດ ແຕ່ໃຫ້ມີຄວາມໝາຍໜັກແໜ້ນ, ຖືເນື້ອໃນເປັນຕົ້ນຕໍ-ຮູບການເປັນສໍາຄັນ.

ລາຍລະອຽດ ຂອງວິທີການກວດກາປະເມີນ ແມ່ນໃຫ້ອີງໃສ່ ຄູ່ມືການກວດກາປະເມີນຄວາມທຸກຍາກ ແລະ ການພັດທະນາ ຕາມດໍາລັດ 309/ນຍ ແລະເອກະສານທີ່ກ່ຽວຂ້ອງອື່ນໆ.

5. ເປົ້າໝາຍຜູ້ເຂົ້າຮ່ວມໃນການກວດກາປະເມີນ.

ການກວດກາປະເມີນຄວາມທຸກຍາກ ແລະ ການພັດທະນາ 5 ປີນີ້, ຕ້ອງຮັບປະກັນໃຫ້ໄດ້ຂໍ້ມູນ ຕາມ 4 ເນື້ອໃນ 4 ຄາດໝາຍ. ດັ່ງນັ້ນ, ຕ້ອງຮັບປະກັນ ການເຂົ້າຮ່ວມຂອງທຸກໆຂະແໜງການ ຂອງພັກ-ລັດ-ອົງການຈັດຕັ້ງມະຫາຊົນ ແລະ ທຸກພາກສ່ວນໃນສັງຄົມ; ຂະແໜງການຕົ້ນຕໍ ທີ່ເຂົ້າຮ່ວມແມ່ນປະກອບມີ ຂະແໜງຈັດຕັ້ງ, ແນວລາວສ້າງຊາດ, ຊາວໜຸ່ມປະຊາຊົນປະຕິວັດລາວ, ສະຫະພັນແມ່ຍິງ, ສະຫະພັນນັກຮົບເກົ່າ, ປກສ, ປກຊ, ກວດກາ ແລະ ຄວບຄຸມຢາເສບຕິດ, ຍຸຕິທໍາ, ແຜນການ ແລະ ການລົງທຶນ, ການເງິນ, ກະສິກໍາ ແລະ ປ່າໄມ້, ໂຍທາທິການ-ຂົນສົ່ງ, ພະລັງງານ ແລະ ບໍ່ແຮ່, ອຸດສາຫະກໍາ ແລະ ການຄ້າ, ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ໄປສະນີ-ໂທລະຄົມແລະຂໍ້ມູນຂ່າວສານ, ທະນາຄານ (ທະນາຄານນະໂຍບາຍ (ຖ້າມີ) ), ສຶກສາທິການ ແລະ ກິລາ, ສາທາລະນະສຸກ, ຖະແຫຼງຂ່າວ-ວັດທະນະທໍາ ແລະ ທ່ອງທ່ຽວ, ແຮງງານ ແລະ ສະຫວັດດີການສັງຄົມ, ພາຍໃນ, ຄວາມກ້າວໜ້າຂອງແມ່ຍິງ, ກອງທຶນຫຼຸດຜ່ອນຄວາມທຸກຍາກ (ຖ້າມີ), ໂຄງການເກັບກູ້ລະເບີດບໍ່ທັນແຕກ(ຖ້າມີ) ແລະ ຂະແໜງການອື່ນໆ ທີ່ເຫັນວ່າຈໍາເປັນ.

ນອກຈາກນັ້ນ, ກໍ່ຕ້ອງໄດ້ມີການເຂົ້າຮ່ວມ ຂອງຜູ້ປະກອບການ, ສະຖາບັນການເງິນຈຸລະພາກ, ອີງຕາມສະພາບຄວາມເປັນຈິງຂອງທ້ອງຖິ່ນ.

ສິ່ງສໍາຄັນ ແມ່ນຕ້ອງປຸກລະດົມຄວາມເປັນເຈົ້າການຢ່າງຕັ້ງໜ້າໃນການຈັດຕັ້ງປະຕິບັດຕົວຈິງ ຂອງ ຄະນະພັກກຸ່ມບ້ານ, ຄະນະພັກ ແລະ ອົງການປົກຄອງບ້ານ, ເຖົ້າແກ່ແນວໂຮມ, ໜ່ວຍໄກ່ເກ່ຍ, ພະນັກງານລົງຮາກຖານ ແລະ ປະຊາຊົນບັນດາເຜົ່າ.

6. ງົບປະມານຮັບໃຊ້ໃຫ້ການກວດກາປະເມີນ.

ສໍາລັບງົບປະມານຮັບໃຊ້ໃນການກວດກາປະເມີນ 5 ປີ ຄັ້ງນີ້ ໃຫ້ສົມທົບ ແລະ ແບ່ງຄວາມຮັບຜິດຊອບໃນການໃຊ້ຈ່າຍ ລະຫວ່າງ ສູນກາງກັບທ້ອງຖິ່ນ ຕາມກົນໄກສາມສ້າງ ໂດຍໃຫ້ສູນກາງຮັບຜິດຊອບຝຶກອົບຮົມ ແລະ ສະໜອງແບບສອບຖາມກໍ່ຄືເອກະສານຕ່າງໆ; ສ່ວນຄ່າໃຊ້ຈ່າຍໃນການຝຶກອົບຮົມຂັ້ນເມືອງ ແລະ ບ້ານລວມທັງການລົງກວດກາປະເມີນຕົວຈິງ ແມ່ນໃຫ້ທ້ອງຖິ່ນຮັບຜິດຊອບ. ບັນດາຂະແໜງການກ່ຽວຂ້ອງ ກໍ່ຕ້ອງ ໄດ້ປະກອບສ່ວນ ທຶນຮອນ ຮັບໃຊ້ໃຫ້ການກວດກາປະເມີນ ຄວາມທຸກຍາກ ແລະ ການພັດທະນາ ຕາມເງື່ອນໄຂ ແລະ ມາດຕະຖານທີ່ກ່ຽວຂ້ອງຂອງຂະແໜງການຂອງຕົນ.

7. ມາດຕະການໃນການຈັດຕັ້ງປະຕິບັດ.

- ມອບໃຫ້ຄະນະຮັບຜິດຊອບການກວດກາປະເມີນຄວາມທຸກຍາກ ແລະ ການພັດທະນາ 5 ປີ ໂດຍມີຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ ສົມທົບກັບກະຊວງແຜນການ ແລະ ການລົງທຶນເປັນໃຈກາງ, ຕິດຕາມ-ຊຸກຍູ້ ການກວດກາປະເມີນນີ້ ໃຫ້ມີຜົນສໍາເລັດ.

- ມອບໃຫ້ບັນດາກະຊວງ ແລະ ອົງການທຽບເທົ່າ ຂັ້ນສູນກາງ, ແຂວງ, ນະຄອນຫຼວງວຽງຈັນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດ ຄຳສັ່ງສະບັບນີ້ ດ້ວຍຄວາມຮັບຜິດຊອບສູງ ບົນຈິດໃຈແຂ່ງຂັນຮັກຊາດ ແລະ ສ້າງບ້ານພັດທະນາ, ຊຸກຍູ້ວຽກງານສາມສ້າງ ເພື່ອຄຳນັບຮັບຕ້ອນ 2 ວັນປະຫວັດສາດ ຂອງພັກ ກໍ່ຄືຂອງຊາດ ແລະ ກອງປະຊຸມໃຫຍ່ຄັ້ງທີ X ຂອງພັກເຮົາ.

ນາຍົກລັດຖະມົນຕີ

ທອງສິງ ທຳມະວົງ